## I. ສະພາບລວມ :

### 1. ຈຸດປະສົງຂອງການສຳຫຼວດ :

ປະຊາຊົນລາວເຮົາສ່ວນໃຫຍ່ ແມ່ນດຳລົງຊີວິດຢູ່ໃນເຂດຊົນນະບົດ ຊຶ່ງການເຂົ້າເຖິງການບໍລິການ ສາທາລະນະສຸກ ແມ່ນມີຄວາມຍຸ້ງຍາກ. ເຖິງແມ່ນວ່າ ໄດ້ມີການຕິດຕາມເກັບກຳລາຍຂໍ້ມູນດ້ານນີ້ເປັນປົກກະຕິກໍ່ຕາມ, ແຕ່ຄວາມຕ້ອງການທາງດ້ານຂໍ້ມູນຂ່າວສານ ແມ່ນກວ້າງຂວາງ ແລະ ລົງເລິກຕື່ມອີກ ເພື່ອຊ່ວຍໃນການປັບປຸງ ແຜນການປ້ອງກັນ, ປິ່ນປົວພະຍາດ ແລະກະຈາຍຊັບພະຍາກອນໃຫ້ແທດເໝາະ, ປະກອບສວນເຮັດໃຫ້ ຊີວິດການເປັນຢູ່ ຂອງປະຊາຊົນດີຂຶ້ນ. ສະນັ້ນ ການປະຕິບັດການສຳຫລວດນີ້ ແມ່ນ ມີ 2 ຈຸດປະສົງຕົ້ນຕໍ ດັ່ງນີ້ :

- ເກັບກຳຂໍ້ມູນຂ່າວສານນຳອານາດການປົກຄອງຂັ້ນບ້ານ ເພື່ອສ້າງແຜນງານຂັ້ນບ້ານ. ໂດຍໃສ່ສະພາບຕົວຈິງຂອງເດັກ ທີ່ດຳລົງຊີວິດຢູ່ໃນບ້ານ ແລະປະຊາຊົນໃນບ້ານສາມາດກຳນົດແຜນງານ ແລະຈັດບູລິມາສິດ ສຳຫລັບແຜນພັກທະນາໃນແຕ່ລະກິດຈະກຳ. ຈາກເຫດຜົນດັ່ງກ່າວ, ຂັ້ນເມືອງຈຳເປັນຈະຕ້ອງມີຂໍ້ມູນຂ່າວສານລະອຽດສົມຄວນ ເພື່ອຈັດລຽງ ແລະສັງລວມເອົາ ດັຊະນີທີ່ຈຳເປັນຈາກການສຳຫລວດນີ້ ເພື່ອຄົ້ນຄວ້າປົກສາຫາລື ໃນການສ້າງແຜນມາແຕ່ບ້ານ.
- ມັນຈະເປັນຂໍ້ມູນພື້ນຖານ ເພື່ອວັດແທກ ແລະຕິດຕາມຜົນກະທົບ ແລະຄວາມຄືບໜ້າຂອງໂຄງການ ໃນຕໍ່ໜ້າ. ບັນດາຂໍ້ມູນແຕ່ລະບ້ານນີ້ ຈະໄດ້ຖືກເກັບມ້ຽນໃນຄອມພິວເຕີ.

### 2. ເປົ້າໝາຍ ຂອງການສຳຫລວດ :

ການສຳຫຼວດນີ້ ຈະດຳເນີນຢູ່ 18 ແຂວງ ແລະກວມເອົາ 300 ບ້ານ, 6000 ຄົວເຮືອນ. ຄາດວ່າ ຈະມີເດັກນ້ອຍ ອາຍຸ ຕ່ຳກວ່າ 5 ປີ ໃນການສຳຫລວດ ປະມານ.. ຄົນ

## II. ວິທີການການສຳຫລວດ :

### 1. ການຈັດຕັ້ງການສຳຫຼວດ :

ສູນສະຖິຕິແຫ່ງຊາດ ໄດ້ສົມທົບກັບກົມອານາໄມກັນພະຍາດ ກະຊວງສາທາ ລະນະສຸກ ແລະ ອົງການ UNICEF ປະຈຳລາວ ໃນການກະກຽມການສຳຫລວດນີ້.

ສຳຫຼັບ ນັກເດີນສຳຫຼວດ ຢູ່ພາກສະໜາມ ແມ່ນໄດ້ຖືກຄັດເລືອກເອົາຈາກ 2 ອົງການຈັດຕັ້ງ ຄື ພະແນກແຜນການ ແລະການລົງທຶນ (ຂະແໜງສະຖິຕິ ແຂວງລະ 2 ຄົນ) ແລະພະແນກ ສາທາລະນະສຸກ ແຂວງລະ 1 ຄົນ.

**2. ການດຳເນີນການສຳຫຼວດ :**

ເນື້ອໃນຂອງການສຳຫຼວດ ແມ່ນການເກັບກຳລວບລວມຂໍ້ມູນກ່ຽວກັບການສຳຫລວດນີ້ ເຊິ່ງນັກເດີນສຳຫຼວດ ຈະຕ້ອງໄດ້ສຳພາດ ຄົວເຮືອນຕົວແທນ 20 ຄົວເຮືອນຕໍ່ບ້ານ ໃນນັ້ນ ຈະຕ້ອງສຳພາດຫົວໜ້າຄົວເຮືອນ ຫລືຜູ້ຮັບຜິດຊອບດ້ານເສດຖະກິດຂອງຄົວເຮືອນ, ແມ່ຍິງອາຍຸ 15-45 ປີ ທີ່ມີລູກຕ່ຳກວ່າ 5 ປີ. ລວມຈຳນວນຄົວເຮືອນທີ່ເປັນເປົ້າໝາຍໃນການສຳຫລວດມີ 6000 ຄົວເຮືອນ.

**3. ຕາຕະລາງເວລາ ເຄື່ອນໄຫວກ່ອນ ແລະໄລຍະການສຳຫຼວດ :**

ຕາຕະລາງສຳຫຼັບປະຕິບັດການກ່ອນ ແລະໄລຍະການສຳຫຼວດມີຄື :

- 15-27/2/2006 ຝຶກອົບຮົມຢູ່ວຽງຈັນ
- 1/3/ ຮອດ 30/4/2006 ປະຕິບັດການສຳຫລວດຢູ່ພາກສະໜາມ
- ເດືອນ 9 ປີ 2006 ສຳເລັດການກວດແກ້ຂໍ້ມູນ
- ເດືອນ 10 ປີ 2006 ກະກຽມການວິໃຈ ແລະຂຽນບົດລາຍງານ
- ເດືອນ 12 ປີ 2006 ປະກາດຜົນການສຳຫລວດ

## III. ໜ້າທີ່ຂອງນັກເດີນສຳຫລວດ :

ຄຸນນະພາບ ຂອງການສຳຫລວດນີ້ ແມ່ນຂຶ້ນກັບນັກເດີນສຳຫລວດເປັນສ່ວນໃຫ່ຍ ໃນການນຳມີຄຸນນະພາບ ຜົນຂອງການສຳຫລວດ. ດັ່ງນັ້ນ ມັນຈິ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ ແລະນັກກວດກາ ຈະຕ້ອງປະຕິບັດຕາມຄຳແນະນຳໃນປື້ມຄູ່ມືນີ້ . ບັນດານັກເດີນສຳຫລວດມີໜ້າທີ່ ແລະພັນທະຕ່າງໆກ່ອນສຳຫລວດ ໃນໄລຍະສຳຫລວດ ແລະພາຍຫລັງສຳຫລວດແລ້ວ.

**3.1. ໜ້າທີ່ກ່ອນການສຳຫລວດ :**

- ເຂົ້າຮ່ວມການຝຶກອົບຮົມ ທີ່ຄະນະຮັບຜິດຊອບການສຳຫລວດຈັດຂື້ນ.
- ກວດກາ ເອກະສານສຳຫລວດ, ໃບສອບຖາມ, ອຸປະກອນຮັບໃຊ້ການສຳຫລວດ ກ່ອນການອອກເດີນທາງ
- ສະເໜີຕົນເອງຕໍ່ກັບອຳນາດການປົກຄອງບ້ານທີ່ຕົນຈະປະຕິບັດການສຳຫລວດ
- ຂຶ້ນບັນຊີຄົວເຮືອນ ແລະຄັດເລືອກຄົວເຮືອນຕົວແທນ
- ນັດພົບກັບບັນດາຄົວເຮືອນຕົວແທນ ໂດຍຜ່ານຄະນະບ້ານເປັນຊີ້ກາງ

- ຈົດກ່າຍລະຫັດທີ່ຕັ້ງໃສ່ໜ້າປົກຂອງໃບສອບຖາມ.

### 3.2. ໜ້າທີ່ໃນຊ່ວງໄລຍະເດີນສຳຫລວດ :

- ສຳພາດທຸກຄຳຖາມທີ່ໄດ້ມີໃນແບບໃບສອບຖາມ. ການສຳພາດຕ້ອງປະຕິບັດຕາມການແນະນຳຂອງໃບສອບຖາມ ຊຶ່ງໃບສອບຖາມ ໄດ້ແຍກອອກເປັນ 3 ໃບສອບຖາມ ຄື :
  - ການສອບຖາມຫົວໜ້າຄົວເຮືອນ ຫລືຜູ້ຮັບຜິດຊອບ (ຜູ້ລັກແທ່ລງ) ໃນຄົວເຮືອນ.
  - ການສອບຖາມແມ່ຍິງ ອາຍຸ 15-45 ປີ ທີ່ມີລູກອາຍຸຕ່ຳກວ່າ 5 ປີ.
  - ການສອບຖາມແມ່ ທີ່ມີລູກ ອາຍຸຕ່ຳກວ່າ 5 ປີ.
  - ການຊັ່ງນ້ຳໜັກ ແລະວັດແທກເດັກນ້ອຍ ທີ່ມີອາຍຸຕ່ຳກວ່າ 5 ປີ.
  - ການກວດເລືອດ, ຍ່ງວ, ອາຈົມ

### 3.3. ໜ້າທີ່ພາຍຫລັງສຳເລັດການສຳຫລວດ :

- ສົ່ງບັນດາເອກກະສານທີ່ໄດ້ສຳພາດແລ້ວ ໃຫ້ນັກກວດກາ ລວມມີ : ໃບສອບຖາມທີ່ສຳພາດແຕ່ລະຄົວເຮືອນຕົວແທນແລ້ວ ຊຶ່ງໄດ້ຈັດໄວ້ ບ້ານນັ້ງ ໂງໂລໂນນັ້ງ.
- ບົດລາຍສະພາບຂອງບ້ານ ກ່ຽວກັບບັນຫາຫຍຸ້ງຍາກຕ່າງໆ ຫລືຂໍ້ສັງເກດຕ່າງໆໃຫ້ນັກເດີນສຳຫລວດ.

### 3.4. ການຝຶກອົບຮົມ ນັກເດີນສຳຫລວດ :

ຜູ້ທີ່ຖືກຄັດເລືອກ ຈະມາເຮັດວຽກເປັນນັກເດີນສຳຫລວດ ຈຳເປັນຕ້ອງໄດ້ຜ່ານການຝຶກອົບຮົມຢ່າງລະອຽດຄັກແນ. ການຝຶກອົບຮົມປະກອບມີ ການຝຶກອົບຮົມຢູ່ໃນຫ້ອງຮຽນ ແລະຝຶກອົບຮົມຕົວຈິງ (ພາກສະໜາມ). ນັກເດີນສຳຫລວດ ຈະຕ້ອງອ່ານ ແລະຄົ້ນຄວ້າ ທຸກຄຳເວົ້າໃນປື້ມຄູ່ມື ແລະບັນດາໃບສອບຖາມ, ວິທີການຈົດກ່າຍທຸກຂັ້ນຕອນ, ນັກເດີນສຳຫລວດສາມາດຊັກຖາມໄດ້ທຸກເວລາໃນເວລາຝຶກອົບຮົມ ເພື່ອຫລີກເວັ້ນການເຮັດຜິດພາດໃນເວລາປະຕິບັດວຽກງານຕົວຈິງ.

ການຝຶກອົບຮົມນັກເດີນສຳຫລວດ ຈະໃຊ້ເວລາຢູ່ 5 ວັນ, ບໍ່ນັບການເດີນທາງໄປ ແລະກັບຂອງນັກເດີນສຳຫລວດ ຄື :

1. ຮຽນພາກທິດສະດີຕ່າງໆ 5 ວັນ
2. ລົງຝຶກຫັດຕົວຈິງຢູ່ບ້ານ 2 ວັນ
3. ທົບທວນຄືນ ແລະແຜນການປະຕິບັດຕົວຈິງ 2 ວັນ.

### 3.4. ການສ້າງແຜນການເຮັດວຽກ

ສຳຫຼັບຕາຕະລາງແຜນການເຮັດວຽກ ຂອງນັກເດີນສຳຫຼວດ ຄາດກະເອົາຕາມຄວາມເໝາະສົມ. ໂດຍປົກກະຕິແມ່ນໃຫ້ຄິດໄລ່ເອົາ ປະມານ 2 - 3 ມື້ ຕໍ່ນຶ່ງບ້ານ ລວມທັງການເດີນທາງໄປມາລະຫວ່າງບ້ານຕໍ່ບ້ານ, ເມືອງຕໍ່ເມືອງ ເຊິ່ງຈະຕ້ອງຮູ້ວ່າບ້ານນັ້ນ:

⇒ ຕັ້ງຢູ່ໃສ?

⇒ ໄກປານໃດ?

⇒ ຈະໄປຮອດບ້ານຄືແນວໃດ ? ແລະ

⇒ ໃຊ້ເວລາເດີນສຳຫຼວດສະເລັ່ຍແຕ່ລະບ້ານດົນປານໃດ?.

⇒ ພ້ອມດຽວກັນຈະຕ້ອງກຳໄດ້ວ່າ ບ້ານໃດທີ່ມີເງື່ອນໄຂຕ່າງໆໝູ່ເຊັ່ນ: ດ້ານພາສາປາກເວົ້າ. ດີແທ້, ນັກເດີນສຳຫຼວດຄວນອາໄສຢູ່ກັບບ້ານນັ້ນ ເພື່ອສະດວກໃນການເດີນສຳຫຼວດ ແລະບໍ່ເສຍເວລາ ໃນການເດີນທາງໄປມາຫຼາຍເທື່ອ.

ແຜນການເຮັດວຽກນີ້ ທ່ານຈະຕ້ອງໄດ້ເຮັດຮ່ວມກັບ ທີມເດີນສຳຫຼວດທີ່ທ່ານຮັບຜິດຊອບ. ຕາຕະລາງແຜນການເຮັດວຽກຕ້ອງສະແດງໃຫ້ເຫັນລະອຽດ ໃນການເຄື່ອນໄຫວແຕ່ລະບ້ານ ມື້ຕໍ່ມື້. ຕາຕະລາງດັ່ງກ່າວທ່ານຈະຕ້ອງຮັກສາໄວ້ໃບນຶ່ງ ເພື່ອລົງຕິດຕາມກວດກາ ແລະອີກໃບນຶ່ງແມ່ນໃຫ້ນັກເດີນສຳຫຼວດຂອງທ່ານ.

### 3.5. ອຸປະກອນການເດີນສຳຫລວດ :

ອຸປະກອນ ແລະເອກະສານຕ່າງໆ ຈະຖືກສະໜອງໃຫ້ນັກເດີນສຳຫຼວດໂດຍຜູ້ຕິດຕາມຊ່ວຍເຫລືອ, ຫຼັງຈາກການສ້າງແຜນການເຮັດວຽກຮ່ວມ ກັບນັກຕິດຕາມຊ່ວຍເຫລືອແລ້ວ, ທ່ານຈະຕ້ອງຮັບເອົາບັນດາອຸປະກອນ ແລະເອກະສານ ພ້ອມແບບສອບຖາມທີ່ຈຳເປັນ ຈາກຜູ້ຕິດຕາມຊ່ວຍເຫລືອລວມມີ:

- ໃນ ໂກຼໂລໂນນຶ່ງປະກອບມີ :
  - ບັນຊີລາຍຊື່ຄົວເຮືອນ 1 ສະບັບ
  - ແບບສອບຖາມຄົວເຮືອນ 22 ສະບັບ
  - ແບບໃບສອບຖາມ ແມ່ຍິງ 45 ສະບັບ
  - ແບບໃບສອບຖາມເດັກນ້ອຍ 45 ສະບັບ
  - ບິກ, ສໍດຳ, ແນວລະອັນ.
  - ທີມງານນຶ່ງຕ້ອງມີ ຊີງຊັ່ງນ້ຳໜັກ 1 ອັນ
  - ທີມງານນຶ່ງຕ້ອງມີ ເຄື່ອງວັດແທກ ລວງສູງຂອງເດັກ 1 ອັນ
  - ອຸປະກອນກວດເລືອດ, ຢຽວ ແລະອາຈົມ
  - ບັນດາຢາທີ່ເປັນຕົວຢ່າງ ເຊັ່ນ: ວິຕາມິນ A, ຢາໂກຼໂລກິນ, ຢາທາດເຫລັກ...

- ເອກະສານໃບແຕ່ງຕັ້ງ ແລະໃບສະເໜີຕ່າງໆ ທີ່ຈຳເປັນຈາກອຳນາດການປົກຄອງທ້ອງຖິ່ນ.

## IV. ຄຳສັບແລະນິຍາມທີ່ສຳຄັນ :

### 4.1. ຄົວເຮືອນ:

ຄົວເຮືອນ ແມ່ນຫົວໜ່ວຍນຶ່ງທີ່ມີຄວາມສຳຄັນສຳຫລັບການສຳຫລວດ ຄົວເຮືອນ ແມ່ນກຸ່ມ (ນຶ່ງ ຫລືຫລາຍ) ຄົນທີ່ດຳລົງຊີວິດຮ່ວມກັນເປັນຫລັກ, ຈັດແຈງຫາອາຫານການກິນຢູ່ ແລະ ໃຊ້ສອຍສິ່ງຂອງທີ່ຈຳເປັນຮ່ວມກັນ, ປົກະຕິ, ຄົວເຮືອນປະກອບດ້ວຍກຸ່ມຄົນ ທີ່ສະແດງໃຫ້ເຫັນໃນປື້ມສຳມະໂນຄົວ. ຄົວເຮືອນ ແມ່ນມີຄວາມແຕກຕາງຈາກຄອບຄົວ: ຕົວຢ່າງ ລູກຊາຍ ລູກສາວ ທີ່ດຳລົງຊີວິດເອກະລາດ ບໍ່ຂຶ້ນນຳພໍ່ແມ່ ນັ້ນ ແມ່ນຖືວ່າ ເປັນຄົວເຮືອນນຶ່ງຕ່າງຫາກ.

ປົກະຕິ, ສະມາຊິກຄົວເຮືອນ ມ່ນດຳລົງຊີວິດຮ່ວມກັນໃນເຮືອນຫລັງດຽວກັນ ແລະ ກໍມີບາງເທື່ອຄົວເຮືອນນຶ່ງອາດຈະດຳລົງຊີວິດຢູ່ຫລາຍຫລັງຄາເຮືອນ, ປົກະຕິ ສາຍພົວພັນນີ້ລວມມີ ( ຜົວ, ເມັຍ, ລູກ....) ແຕ່ບາງເທື່ອ ກໍລວມເອົາຄົນທີ່ບໍ່ມີສາຍພົວພັນ ມາຢູ່ນຳ (ເຊັ່ນ ລູກຈ້າງ, ກຳມະກອນ......).

ຄົວເຮືອນລວມໝູ່ ແມ່ນບໍ່ເປັນເປົ້າໝາຍໃນການສຳຫລວດຄັ້ງນີ້, ຄົວເຮືອນລວມໝູ່ ແມ່ນຄົວເຮືອນທີ່ອາໃສດຳລົງຊີວິດຢູ່ໃນຮູບແບເຮືອນລວມຂອງ ບໍລິສັດ, ໂຮງງານ, ວັດ, ໂຮງໝໍ...

### 4.2. ນິຍາມຕົວເມືອງ ແລະຊົນນະບົດ :

ການໝາຍລະຫັດຂອງບ້ານວ່າ ແມ່ນຕົວເມືອງ ຫລືຊົນນະບົດນັ້ນໃຫ້ທ່ານກວດຄືນທັງຖາມ ແລະ ສັງເກດການໄປພ້ອມໃນເວລາທີ່ທ່ານໄປຮອດບ້ານ. ຖ້າມີ 3 ໃນ5 ຂໍ້ຂ້າງລຸ່ມໃຫ້ຖືວ່າແມ່ນບ້ານຕົວເມືອງຄື:

1. ມີຈຳນວນຄົວເຮືອນຫລາຍກ່ວາ 100 ຄົວເຮືອນຂຶ້ນໄປ ແລະ ມີຄົນອາໃສຢູ່ຫລາຍກ່ວາ 600 ຄົນຂຶ້ນໄປ.
2. ມີຫົນທາງລົດໃຫຍ່ໄປຮອດບ້ານທັງໃນລະດູຝົນ ແລະ ລະດູແລ້ງ.
3. ມີໄຟຟ້າໄປເຖິງ, ແລະ ມີຄົນໃນບ້ານຊົມໃຊ້ໄຟຟ້າ 70% ຂື້ນໄປ ຫລື 2/3 ຂອງບ້ານ.
4. ມີນ້ຳປະປາເຖິງ, ແລະມີຄົນໃນບ້ານນຳໃຊ້ ນ້ຳປະປາ 70% ຂື້ນໄປ ຫລື 2/3 ຂອງບ້ານ.
5. ມີຕະລາດທຳການຊື້ຂາຍຕະລອດວັນ.

## V. ພາລະບົດບາດຂອງນາຍບ້ານ:

ຖ້າເປັນໄປໄດ້, ໃຫ້ພົວພັນຫານາຍບ້ານ ແມ່ນເປັນຜູ້ປະສານສົມທົບກັບນັກເດີນສຳຫລວດ ເຊັ່ນ:

- ເປັນຜູ້ບອກລາຍຊື່ຫົວໜ້າຄົວເຮືອນທັງໝົດໃນບ້ານ ເພື່ອສ້າງບັນຊີລາຍຊື່ຄົວເຮືອນໃນບ້ານ.
- ເປັນຜູ້ພາທາງໃຫ້ຜູ້ເດີນສຳຫລວດໄປຫາທີ່ຕັ້ງຂອງແຕ່ລະຄົວເຮືອນໃນເວລາລົງສຳພາດຕົວຈິງ.

ໃນເວລາສິ້ນສຸດການສຳພາດທຸກໆຄົວເຮືອນໃນບ້ານແລ້ວ, ນາຍບ້ານ ຈະຕ້ອງໄດ້ເຊັນຊື່ຢັ້ງຢືນ ພ້ອມກັບຈ້ຳກາທັບຂອງບ້ານໃສ່ດ້ານໜ້າຂອງຕາຕະລາງບັນຊີຄົວເຮືອນ. ເພື່ອຢັ້ງຢືນວ່າບັນຊີຄົວເຮືອນໃນບ້ານແມ່ນຖືກຕ້ອງ ແລະການລົງມາເຮັດວຽກຂອງຜູ້ເດີນສຳຫລວດແມ່ນສຳເລັດແລ້ວ.

ເວລາສຳພາດຄົວເຮືອນ ບໍ່ຄວນໃຫ້ນາຍບ້ານຢູ່ນຳ. ບັນຫານີ້ ແມ່ນມີຄວາມສຳຄັນ ຜູ້ເດີນສຳຫລວດ ຕ້ອງໄດ້ເອົາໃຈໃສ່ ຮັກສາຄວາມລັບຂອງຄຳຖາມມູນການສຳຫລວດ.

## VI. ການຂຶ້ນບັນຊີຄົວເຮືອນ :

ນັກເດີນສຳຫລວດຕ້ອງຈົດລາຍຊື່ຄົວເຮືອນທັງໝົດທີ່ອາໄສຢູ່ໃນຂອບເຂດບ້ານ:

- ບໍ່ໃຫ້ຈົດບັນຊີຄົວເຮືອນໃດນຶ່ງທີ່ມີທີ່ຢູ່ອາໃສເປັນພຽງຊົ່ວຄາວເຊັ່ນ: ( ທຽງນາ, ທຽງໄຮ່.. .) ໃນລະດູການໃດນຶ່ງເຊັ່ນເກັບກ່ຽວ, ປັກດຳ....
- ບໍ່ໃຫ້ຈົດເອົາຄົວເຮືອນທີ່ໄດ້ຍ້າຍອອກຈາກບ້ານແລ້ວ
- ບໍ່ໃຫ້ຈົດເອົາຫລັງຄາເຮືອນທີ່ຂຶ້ນກັບໂຄງການກໍ່ສ້າງໃດນຶ່ງ ຫລື ຫລັງຄາເຮືອນທີ່ບໍ່ມີຄົນອາໄສຢູ່

ບັນຊີຄົວເຮືອນໃນແຕ່ລະບ້ານຕ້ອງໄດ້ຍົກເວັ້ນ ເຊັ່ນ:

- ຄົວເຮືອນຂອງຊ່ຽວຊານຕ່າງປະເທດ, ທີ່ມາເຮັດວຽກຊົ່ວຄາວໃນໄລຍະເວລາໃດນຶ່ງ
- ຄົວເຮືອນລ່ວມໝູ່ ( ລະອຽດເບິ່ງຄຳຖາມ 9.1)

ສຳຫລັບນິຍາມຄົວເຮືອນ ຄວນຈື່ໄວ້ວ່າ: ຄົວເຮືອນ ແມ່ນປົກກະຕິແລ້ວປະກອບດ້ວຍກຸ່ມຄົນທີ່ໄດ້ບັນທຶກໄວ້ຢູ່ໃນປຶ້ມສຳມະໂນຄົວ. ເຖິງຢ່າງໃດກໍຕາມ, ບາງເທື່ອປຶ້ມສຳມະໂນຄົວກໍອາດຈະໃຊ້ການບໍ່ໄດ້ ຕົວຢ່າງໃນກໍລະນີ:

1. ມີຄົວເຮືອນນື່ງໄດ້ມາອາໃສຢູ່ຖຽງນາຂອງຕົນເອງ, ຊື່ງເຮືອນແມ່ນຢູ່ອີກບ້ານນື່ງແຕ່ເຂົາເຈົ້າໄດ້ມາອາໄສຢູ່ເປັນເວລາ 2-3 ປີ ຜ່ານມາແລ້ວ. ໃນຕົວຈິງລາວແມ່ນຂື້ນສຳມະໂນຄົວຢູ່ບ້ານເດີມພຸ້ນ, ກໍລະນີນີ້ ແມ່ນໃຫ້ຂື້ນບັນຊີເຂົ້າໃນບ້ານປະຈຸບັນ.
2. ໃນກໍລະນີດຽວກັນນີ ຄົວເຮືອນທາກຫຽວໄປຫຽວມາ ໃນແຕ່ລະໄລຍະຂອງລະດູການຜລິດ ແມ່ນ ບໍ່ໃຫ້ບັນເອົາ.

## VII. ການປະຕິບັດການເດີນສຳຫລວດ :

### 7.1. ການນັດໝາຍກັບຄົວເຮືອນ :

ຈົ່ງພະຍາຍາມໄປພົບນາຍບ້ານ ຫຼືຄະນະບ້ານກ່ອນຈະລົງສຳພາດຄົວເຮືອນ. ຖ້າເປັນໄປໄດ້ໃຫ້ນັດໝາຍກັບຄົວເຮືອນກ່ອນເພື່ອໄປເກັບລວບລວມຄຳຖາມມູນ. ບໍ່ຄວນໃຫ້ຄົວເຮືອນລໍຖ້າໂດຍບໍ່ຈຳເປັນ. ໃນເວລາທ່ານໄປເຖີງຄົວເຮືອນ, ແຕ່ຄົວເຮືອນບໍ່ພ້ອມໃຫ້ສຳພາດ, ທ່ານອາດຈະນັດເວລາໃໝ່ເພື່ອກັບຄືນມາສຳພາດ.

**<u>ຄຳຖາມຄວນຈົດຈຳ,</u>** ໃນການສ້າງແຜນການ, ນັກເດີນສຳຫລວດຄວນຄຳນືງເຖີງໄລຍະເວລາການເດີນທາງ ແລະການໃຊ້ເວລາໃນແຕ່ລະມື້ເພື່ອໃຫ້ທັນກັບກຳນົດເວລາການສຳຫລວດທີ່ໄດ້ວາງໄວ້.

### 7.2. ຜູ້ທີ່ເປັນເປົ້າໝາຍໃນການສຳພາດ :

ການສຳຫລວດຄັ້ງນີ້ ແມ່ນແນໃສ່ ຫົວໜ້າຄົວເຮືອນ ຫລືພັນລະຍາຂອງລາວ ແລະ ຜູ້ໃຫຍ່ທຸກຄົນໃນຄົວເຮືອນຄວນແຍກກັນຖາມໄດ້ຫລາຍເທົ່າໃດຍິ່ງດີ. ສ່ວນແມ່ ແມ່ນຈະຕອບຄຳຖາມກ່ຽວກັບຕົນເອງ ແລະຕອບຄຳຖາມໃຫ້ລູກ. ບໍ່ຄວນຖາມເດັກ, ເພື່ອນບ້ານ ຫລືບຸກຄົນອື່ນທີ່ບໍ່ເປັນສະມາຊິກໃນຄົວເຮືອນ. ນັກເດີນສຳຫລວດອາດຈະຊອກຫາບຸກຄົນທີ່ເໝາະສົມທີ່ສຸດທີ່ສາມາດໃຫ້ຄຳຕອບໄດ້ໃນຄົວເຮືອນດັ່ງກ່າວ.

### 7.3. ພາສາທີ່ໃຊ້ສຳພາດ

ເມື່ອນັກເດີນສຳຫລວດໄປເຖີງຄົວເຮືອນ, ຄວນໃຊ້ພາສາທີ່ທັງສອງສາມາດເຂົ້າໃຈກັນໄດ້ດີທີ່ສຸດ, ຖ້າມີລ່າມ ( ຜູ້ແປພາສາ ) ຄວນລະມັດລະວັງໃນການໃຊ້ສັບໃຫ້ໃກ້ຄຽງກັບຄຳຖາມທີ່ມີຢູ່ໃນແບບສອບຖາມ.

### 7.4. ສິ່ງທີ່ຄວນປະຕິບັດ ໃນເວລາສຳພາດ

ທັດສະນະຜູ້ຕອບໃນເວລາສຳພາດແມ່ນຂື້ນກັບການປະພຶດຕົນຂອງນັກເດີນສຳຫລວດ ທີ່ຈະສຳພາດ. ປົກະຕິຜູ້ຕອບແມ່ນໃຫ້ຄວມຮ່ວມມືເປັນຢ່າງດີ ຖ້າພວກເຂົາເຈົ້າເຂົ້າໃຈຄຳຖາມ ແລະ ນັ້ນແມ່ນຄວາມສາມາດຂອງນັກເດີນສຳຫລວດທີ່ຈະຕ້ອງເຮັດ. ເຂົ້າໃຈໃນແບບສອບຖາມແລະ ສາລະບານຂອງປື້ມຄູ່ມື ແມ່ນເປັນສິ່ງສຳຄັນ. ໃນການສຳພາດ ຄວນວາງລັກສະນະ ທ່າທີສຸພາບອ່ອນນ້ອມ ແລະເປັນກັນເອງກັບຄົວເຮືອນ. ເອົາໃຈໃສ່ຟັງຢ່າງລະມັດລະວັງຄຳຕອບຂອງຜູ້ຖືກສຳພາດ ເພື່ອສະແດງໃຫ້ຜູ້ຖືກສຳພາດເຫັນເຖິງຄວາມເອົາໃຈໃສ່ ແລະສົນໃຈ ແລະໃຫ້ຄວາມສຳຄັນຕໍ່ຄຳເວົ້າທີ່ຜູ້ຖືກສຳພາດກຳລັງເວົ້າ.

ໂດຍປົກະຕິຈະໃຊ້ເວລາຢູ່ປະມານ 1-2 ຊົ່ວໂມງ ສຳຫລັບການສຳພາດ. ການສຳພາດຄວນໄປຕາມຄຳຖາມເພື່ອເຮັດໃຫ້ຜູ້ຕອບເຂົ້າໃຈງ່າຍ ແລະບໍ່ເສຍເວລາ. ຜູ້ຖືກສຳພາດອາດຈະບໍ່ສົນໃຈຖ້າຫາກວ່າໃນການຖາມບໍ່ຕໍ່ເນື່ອງ ແລະ ຍຸດເປັນໄລຍະຍາວ ລະຫວ່າງຄຳຖາມນີ້ຫາຄຳຖາມຕໍ່ໄປ ເພາະວ່າຄົວເຮືອນອາດບໍ່ເຂົ້າໃຈເຖິງໂຄງສ້າງ ຂອງຄຳຖາມເປັນແນວໃດ ແລະ ໂຄງສ້າງວຽກແມ່ນຈະໄປໃນຮູບໃດ.

ທ່ານແມ່ນນັກເດີນສຳຫລວດ, ດັ່ງນັ້ນ <u>*ບໍ່ຈຳເປັນຕ້ອງຈົດເອົາຄຳຕອບທີ່ຜູ້ຖືກສຳພາດຕອບໃນເວລານັ້ນໂລດ. ຖ້າມີຄຳຕອບໃດບໍ່ຄັກແນ່, ບໍ່ຈະແຈ້ງ ທ່ານຈະຕ້ອງໃຊ້ພົກໄຫວເພື່ອກວດສອບໃຫ້ໄດ້ຄຳຕອບທີ່ຖືກຕ້ອງ ແລະ ຊັດເຈນກ່ວາເກົ່າ*</u>. ໃນໄລຍະການສຳພາດຈິ່ງສ້າງມະໂນພາບ ເພື່ອໃຫ້ເຫັນພາບລວມໃນດ້ານສຸຂະພາບ ແລະພາວະການເຈັບເປັນຂອງຄົວເຮືອນຈະຊ່ວຍໃຫ້ທ່ານເຂົ້າໃຈຕື່ມກ່ຽວກັບຄຳຕອບທີ່ຖືກຕ້ອງ. ຕ້ອງແນ່ໃຈຄັກເວລາຂຽນຄຳຕອບເຂົ້າໃນບ່ອນທີ່ຕ້ອງການບັນທຶກ. ໃນກໍລະນີ ມີຄຳຖາມທີ່ບໍ່ກົມກ່ຽວກັນກັບຄຳຖາມ ທ່ານນັກສຳຫລວດກໍຕ້ອງກວດຄືນເພື່ອຄວາມແນ່ໃຈທຸກຄັ້ງ.

ໃນເວລາສຳພາດຜູ້ເດີນສຳຫລວດຈະຕ້ອງເປັນກາງຢູ່ຕະຫລອດເວລາ. <u>*ຕ້ອງລະມັດລະວັງການໃຊ້ຄຳຖາມທີ່ມີລັກສະນະຊັກນຳ ເພື່ອໃຫ້ຜູ້ຕອບເຫັນດີນຳ ຄຳເວົ້າໃນເວລາຖາມຄຳຖາມ. ຕ້ອງຫລີກລ້ຽງການໃຫ້ສັນຍານແທນຄຳຕອບ ດ້ວຍສາຍຕາ ຫລືສຳນຽງແຂງ*</u> ເຊັ່ນ: "ຖືກ ຫລື ຜິດ". ຖ້າເຫັນວ່າຄຳຕອບຍັງບໍ່ຈະແຈ້ງ (ຍັງເປັນທີ່ສົງໃສ) ແລະຕ້ອງການຄຳຕອບທີ່ດີກ່ວານັ້ນ ຈຳເປັນຕ້ອງຄົ້ນຫາຄຳຕອບ ທ່ານກໍຄວນວາງຕົວເປັນກາງເຊັ່ນ: " ທ່ານຈະອະທິບາຍຕື່ມອີກຈັກໜ້ອຍໄດ້ບໍ່?" ບໍ່ຄວນໃຊ້ຄຳຖາມທີ່ມີລັກສະນະຕອບໃຫ້ພ້ອມ ຫລືແນະນຳຄຳຕອບເຊັ່ນ: " ທ່ານບໍ່ເຄີຍມີອຸບັດຕິເຫດແມ່ນບໍ່?".

**ການແນະນຳຕົນເອງກ່ອນການສຳພາດ**

- ກ່ອນການສຳພາດທ່ານຈະຕ້ອງໄດ້ແນະນຳຕົນເອງ ແລະອະທິບາຍຈຸດປະສົງ ແລະ ເປົ້າໝາຍຂອງການສຳຫລວດຈາກນັ້ນກໍສະເໜີສິ່ງທີ່ຕ້ອງການຈາກຄົວເຮືອນ. ເອົາໃຈໃສ່ສ້າງຄວາມເປັນກັນເອງກັບຄົວເຮືອນຕະລອດເວລາແຕ່ເລີ່ມຕົ້ນຈົນຈົບການສຳພາດ.
- ຖ້າຜູ້ຖືກສຳພາດຍັງມີຄວາມລະແວງສົງໃສ ກັງວົນກ່ຽວກັບຄຳຕອບໃນຄຳຖາມ ທ່ານຈະຕ້ອງໄດ້ອະທິບາຍຄືນວ່າທຸກໆຄຳຕອບໃນໃບສອບຖາມນີ້ຈະຖືເປັນຄວາມລັບ ແລະ ແນ່ໃຈວ່າບໍ່ມີສະມາຊິກໃນຄົວເຮືອນອື່ນຢູ່ໃນທີ່ນັ້ນໃນເວລາສຳພາດ.
- ໃຫ້ໂຄສະນາຊວນເຊື່ອ ແລະຊັກຈູງຄົວເຮືອນ ເພື່ອໃຫ້ເຂົາເຈົ້າໃຫ້ການຮ່ວມໄມ້ຮ່ວມມືນຳ.
- ກະກຽມ ທຸກໆ ຄຳຕອບລ່ວງໜ້າໄວ້ເພື່ອຄົວເຮືອນອາດຈະມີຄຳຖາມ, ຖ້າທ່ານຫາກບໍ່ສາມາດອະທິບາຍ ຫລື ບໍ່ສາມາດຕອບ ທ່ານຈະຕ້ອງຊອກຫານັກກວດກາຂອງທ່ານເພື່ອຂໍຄຳເຫັນ.
- ເມື່ອສຳເລັດການສຳພາດ ນັກເດີນສຳຫລວດຄວນຂອບໃຈຕໍ່ຜູ້ໃຫ້ສຳພາດທີ່ໄດ້ໃຫ້ການຮ່ວມມື.

### 7.5. ການຖາມໃຫ້ໃຊ້ຄຳເວົ້າ ຕາມຄວາມໝາຍໃນແບບສອບຖາມ

ຄວນເອົາໃຈໃສ່ທີ່ສຸດຕໍ່ຄຳເວົ້າໃນແບບສອບຖາມ, ສ່ວນທີ່ສຳຄັນທີ່ສຸດຂອງນັກເດີນສຳຫລວດແມ່ນ ຖາມຄຳຖາມທີ່ມີຄວາມໝາຍອັນດຽວກັນກັບຄຳເວົ້າໃນໃບສອບຖາມ. ນີ້ແມ່ນຫົນທາງດຽວທີ່ຮັບປະກັນໄດ້ວ່າ ການເກັບຄຳຖາມມູນແມ່ນຖືກຕ້ອງ ແລະເປັນເອກະພາບກັນ ພ້ອມທັງຊ່ວຍໃນການສຳພາດນັ້ນລະອຽດດີ. ເວົ້າ ແລະອະທິບາຍຈະແຈ້ງຈະຊ່ວຍໃຫ້ຜູ້ຕອບເຂົ້າໃຈແຈ້ງໃນແຕ່ລະຄຳຖາມ. ອ່ານຄຳຖາມໃຫ້ຜູ້ຖືກສຳພາດຟັງອີກເທື່ອນຶ່ງຫາກມີຄວາມຈຳເປັນ.

## VIII. ຮູບແບບຂອງໃບສອບຖາມ :

ບັນດາຄຳຖາມສ່ວນໃຫ່ຍ ແມ່ນໄດ້ຖືກຈັດວາງໃສ່ຕາຕະລາງຕາມແຖວຕັ້ງ ແລະແບ່ງອອກເປັນ 4 ແຖວຕັ້ງ :

- ແຖວຕັ້ງທີ່ນຶ່ງ : ແມ່ນຫົວຂໍ້ຄຳຖາມທີ່ຈະຕ້ອງຖາມຜູ້ທີ່ຈະໃຫ້ຄຳຕອບ.
- ແຖວຕັ້ງທີ່ສອງ : ແມ່ນບ່ອນໃຫ້ນັກເດີນສຳຫລວດ ອ່ານເບິ່ງບັນດາຄຳຕອບ ທີ່ຄົວເຮືອນຕອບມາ. ຈະຖືກຄຳຕອບທີ່ເທົ່າໃດ.
- ແຖວຕັ້ງທີ່ ສາມ : ບ່ອນຄຳຕອບ ທີ່ນັກເດີນສຳຫລວດຈະຕ້ອງຂຽນຄຳຕອບ ຫລືຂີດວົງມົນຄຳຕອບ ທີ່ຖືກຕ້ອງລົງໃສ່.

- ແຖວຕັ້ງທີ່ສີ່ ບ່ອນໃຫ້ສັງເກດເບິ່ງວ່າ ຄຳຕອບທີ່ຕອບນັ້ນ ໄດ້ມີເຄື່ອງໝາຍໃດແດ່ ເພື່ອເຕັ້ນຂ້າມໄປຫາຄຳຖາມອື່ນ.

ຕົວຢ່າງ: ຄຳຖາມທີ່ ຖາມກ່ຽວກັບນໍ້າສະອາດ ແລະອະນາໄມສິ່ງແວດລ້ອມ:

| | | | |
|---|---|---|---|
| 1. ແຫລ່ງນໍ້າດື່ມຕົ້ນຕໍສຳຫລັບສະມາຊິກຄົວເຮືອນຂອງທ່ານແມ່ນຫຍັງ? | ນໍ້າບາດານ.........................1 | 1 | |
| | ນໍ້າປາປາ............................2 | 2 | |
| | ນໍ້າສ້າງມີທໍ່......................3 | 3 | |
| | ນໍ້າສ້າງບໍ່ມີທໍ່ຫລືນໍ້າຝົນ.......4 | 4 | |
| | ຫ້ວຍ, ຄອງ.........................5 | 5 | |
| | ນໍ້າລິນ...............................6 | 6 | |
| | ນໍ້າແກ້ວ.............................7 | 7 | |
| | ອື່ນໆ.................................8 | 8 | |

- ນັກເດີນສຳຫລວດຈະໝາຍຄຳຕອບທີ່ຜູ້ຖືກຕ້ອງ ໂດຍຂີດວົງມົນໃສ່ຕົວເລກຢູ່ແຖວຕັ້ງທີ່ 3.
- ໃນແບບສອບຖາມມີບາງຄຳຖາມທີ່ຕ້ອງການຄຳຕອບເປີດ ຄື ໃຫ້ນັກເດີນສຳຫລວດຂຽນລົງບ່ອນວ່າງແຖວຕັ້ງທີ່ສອງ.

## IX. ການຈົດກ່າຍຄຳຕອບ :

ການຈົດກ່າຍໃສ່ໃນແບບສອບຖາມ, ທ່ານໝັ້ນໃຈແລ້ວບໍ່ວ່າໄດ້ຈົດກ່າຍຖືກຕ້ອງຄົບຖ້ວນ ແລະຂຽນຈະແຈ້ງໂດຍໃຊ້ບິກສີຟ້າ. ສຳຫລັບເລກແມ່ນໃຊ້ຕົວເລກໂຣມັນ ( 0,1,2,3, ,5,6,7,8,9) ບໍ່ໃຫ້ໃຊ້ຕົວເລກພາສາລາວ. ຕົວເລກທົດສະນິຍົມ (ເລກເສດ) ຫລັງຈຸດ ໃຫ້ຂຽນ ແບບລະບົບຝຣັ່ງເສດ “120.50 “ ຫ້າມຂຽນ “120,50”

**ຄຳຕອບທີ່ນັກເດີນສຳຫລວດຈະຕ້ອງໄດ້ຈົດ ໃນແບບສອບຖາມມີ 3 ປະເພດ:**

1. ຄຳຖາມຂີດວົງມົນອ້ອມຕົວເລກລະຫັດບ່ອນຄຳຕອບຂອງທຸກຄຳຖາມທີ່ມີຕົວເລກລະຫັດ ຕົວຢ່າງ ຄຳຖາມ ການນຳໃຊ້ວິດຖ່າຍ

| | | |
|---|---|---|
| ຄອບຄົວຂອງທ່ານໃຊ້ວິດຖ່າຍ ປະເພດໃດ? | ວິດຊືມ.....................1 | |
| | ວິດຂຸມ.....................2 | |
| | ອື່ນໆໃຫ້ບອກແຈ້ງ........3 | |

2. ຄຳຖາມ ທີ່ຈະຕ້ອງຂຽນຈຳນວນຕົວເລກໃສ່ບ່ອນວ່າງ ຕົວຢ່າງ ຄຳຖາມ

| | | |
|---|---|---|
| 1. ເຮືອນຂອງທ່ານ ມີຈັກຫ້ອງ ? | ______ ______ ຫ້ອງ | |

3. ບາງຄຳຖາມຈະຕ້ອງໝາຍ "✓" ໃສ່ ຮູບສີ່ແຈ ຕົວຢ່າງ :

| | | | | | |
|---|---|---|---|---|---|
| 1.9. ສະພາບໂຮງຮຽນ (ອາຄານ) ເປັນແນວໃດ ? | ໂຮງຮຽນ | (1) | (2) | (3) | |
| | ຊຸດໂຊມ............... | ☐ | ☐ | ☐ | |
| | ປານກາງ............ | ☐ | ☐ | ☐ | |
| | ດີ......................... | ☐ | ☐ | ☐ | |

- ການແກ້ຄືນເວລາຂຽນຜິດ :

ຖ້ານັກເດີນສຳຫລວດຂຽນຜິດ ຫລືຜູ້ຕອບອາດຈະປ່ຽນຄຳຕອບ, ໃຫ້ຂີດຂ້າ ຄຳຕອບທີ່ບໍ່ຖືກຕ້ອງ ແລ້ວຂຽນຄຳຕອບຖືກຕ້ອງຢອງໃສ່ແທນ. ຫ້າມບໍ່ໃຫ້ລຶບຄຳຕອບທີ່ຜິດນັ້ນ. ຕົວຢ່າງ :

- ຂຽນຕົວເລກຜິດ 5000 ໂຕ ⇨ ດັດແກ້ ແມ່ນໃຫ້ຂີດຂ້າໂຕເລກນັ້ນໝົດ
  ~~5000 ໂຕ~~

- ການກວດຄືນແບບສອບຖາມ :

ເວລາທ່ານສົ່ງແບບສອບຖາມທີ່ຈົດກ່າຍຄົບຖ້ວນແລ້ວນັ້ນໃຫ້ນັກກວດກາ. ນັກກວດກາຈະກວດຄືນ ເບິ່ງວ່າແຕ່ລະໃບສອບຖາມ ໄດ້ສຳພາດ ແຕ່ລະຄົວເຮືອນແລ້ວບໍ່ (ທັງໝົດ ມີ 15 ຄົວເຮືອນໃນບ້ານນຶ່ງ). ເຖິງແມ່ນວ່າບໍ່ສາມາດສຳພາດຄົວເຮືອນນັ້ນໄດ້ກໍລະນີໃດກໍຕາມ ຕ້ອງສົ່ງແບບສອບຖາມເປົ່າຂອງແຕ່ລະຄົວເຮືອນຕົວຢ່າງໃນບ້ານຕົວຢ່າງນັ້ນ. ຄົວເຮືອນໃດທີ່ທ່ານຍັງບໍ່ທັນໄດ້ສຳພາດດ້ວຍເຫດຜົນໃດກໍຕາມ, ແບບສອບຖາມຂອງຄົວເຮືອນນັ້ນຈະຕ້ອງລວມຢູ່ໃນຊຸດ ຂອງບ້ານນັ້ນ, ຂຽນລາຍລະອຽດ ເຫດຜົນຕ່າງໆວ່າເປັນຫຍັງຈຶ່ງບໍ່ສາມາດສຳພາດຄົວເຮືອນນັ້ນໄດ້. ໃນກໍລະນີທີ່ທ່ານຄິດວ່າ ຄົວເຮືອນໃດມີບັນຫາກ່ຽວການສຳພາດ ທ່ານຈະຕ້ອງແຈ້ງໃຫ້ນັກກວດກາຊາບ ຊອກຫາວິທີແກ້ໄຂຊ່ວຍ.

♦ **ການກວດຄືນບ້ານຕົວແທນ :**

ການສຳຫລວດນີ້ ແມ່ນໄດ້ອີງໃສ່ບັນຊີບ້ານໃນການສຳຫລວດພົນລະເມືອງ ແລະທີ່ຢູ່ອາໃສທົ່ວປະເທດ ໃນປີ 2005, ຊຶ່ງເປັນເວລາເກືອບ 1 ປີ ຜ່ານມາ ສະນັ້ນ ອາດມີການປ່ຽນແປງ ການຈັດຕັ້ງຂອງບ້ານ ເຊັ່ນ ການຍົກຍ້າຍບ້ານ, ການໂຮມບ້ານ ແລການຍູບບ້ານ. ເພື່ອເຮັດໃຫ້ການ ສຳຫລວດນີ້ ປະຕິບັດຖືກຕ້ອງຕາມຫລັກວິຊາການ ຈຶ່ງຂໍແນະນຳດັ່ງນີ້ :

1. ກໍລະນີ ບ້ານຍົກຍ້າຍ ໄປຢູ່ເມືອງ ຫລືແຂວງອື່ນ ແມ່ນຖືວ່າບໍ່ນອນໃນເປົ້າໝາຍ ຂອງການ ສຳຫລວດເລີຍ.

2. ກໍລະນີ ບ້ານຍູບເຂົ້າກັນກັບບ້ານອື່ນ ໂດຍຍ້າຍຄົວເຮືອນໄປຢູ່ສັບປົນກັນເລີຍ ແມ່ນໃຫ້ເອົາຄົວເຮືອນໝົດບ້ານນັ້ນມາເປັນຖານເພື່ອຄົວເຮືອນຕົວແທນ.
3. ກໍລະນີບ້ານໂຮມກັນ ຊື່ງພຽງແຕ່ໂຮມຊື່ໆ ສ່ວນທີ່ຕັ້ງຂອງຄົວເຮືອນແມ່ນຍັງຢູ່ບ່ອນເກົ່າ ແມ່ນໃຫ້ເລືອກແຕ່ ຈຸດບ້ານເກົ່າເທົ່ານັ້ນ.
4. ກໍລະນີ ແຍກອອກເປັນສອງບ້ານ ແມ່ນໃຫ້ເອົາ ຈຸດບ້ານເດີມ ເປັນຫລັກ.

- **ການຮັກສາຄວາມລັບ :**

ການສໍາຫລວດຈະໄດ້ຮັບຜົນສໍາເລັດກໍຕໍ່ເມື່ອ ທຸກຄົວເຮືອນ ເຊື່ອໝັ້ນວ່າຂ່າວສານທີ່ເຂົາເຈົ້າໃຫ້ນັກເດີນສໍາຫລວດນັ້ນຈະຖືກຮັກສາເປັນເປັນຄວາມລັບ. ໝາຍຄວາມວ່າຄໍາຕອບຂອງຜູ້ຖືກສໍາພາດບໍ່ສາມາດເປີດເຜີຍໃຫ້ຜູ້ໃດຜູ້ນື່ງຟັງ, ນອກຈາກນັກກວດກາ ແລະພະນັກງານຈາກ ສູນສະຖິຕິແຫ່ງຊາດ ເທົ່ານັ້ນ.

**ຫລັກການສໍາຄັນທີ່ສຸດ ໃນການຮັກສາຄວາມລັບ ມີຄື:**

- ນັກເດີນສໍາຫລວດຈະບໍ່ເວົ້າເກີນໜ້າທີ່ຂອງຕົນທີ່ໄດ້ຮັບມອບໝາຍໃນເວລາຝຶກອົບຮົມ;
- ບໍ່ໃຫ້ຜູ້ໃດຜູ້ນື່ງເຂົ້າຟັງນໍາໃນເວລາສໍາພາດຄົວເຮືອນ, ນອກຈາກນັກກວດກາ.
- ຢ່າປ່ອຽໃບສອບຖາມທີ່ໄດ້ສອບຖາມແລ້ວໃຫ້ຜູ້ອື່ນເບິ່ງ ຫລືອ່ານ;
- ຖ້າເປັນໄປໄດ້, ໃນເວລາສໍາພາດໃຫ້ຢູ່ ແຕ່ກັບສະມາຊິກຄົວເຮືອນຕົວແທນ ທີ່ກໍາລັງສໍາພາດເທົ່ານັ້ນ;
- ໃນກໍລະນີທີ່ມີຄົນອື່ນຢູ່ນໍາ ພະຍາຍາມເອົາຄໍາຕອບນໍາແຕ່ຜູ້ທີ່ເຮົາຈະສໍາພາດ ແລະຂໍຮ້ອງບໍ່ໃຫ້ຜູ້ອື່ນຕອບແທນ ຫລືເອົາຄໍາເຫັນຂອງຄົນອື່ນ.

**X. ການເລືອກຄົວເຮືອນຕົວແທນໃນບ້ານ :**

**1. ການຂື້ນບັນຊີຄົວເຮືອນ :**

ຫລັງຈາກທ່ານໄດ້ສະເໜີຈຸດປະສົງ, ເປົ້າໝາຍ ແລະ ຄວາມສໍາຄັນຂອງການສໍາຫລວດໃຫ້ນາຍບ້ານຊາບແລ້ວ ທ່ານຈະຕ້ອງສົມທົບກັບນາຍບ້ານ ເພື່ອຂື້ນບັນຊີຄົວເຮືອນ. ຈຸດປະສົງຂອງການຂື້ນບັນຊີຄົວເຮືອນ ແມ່ນເພື່ອຄັດເລືອກເອົາ 15 ຄົວເຮືອນຕົວແທນມາເປັນເປົ້າໝາຍສໍາຫລວດ. ຫລັງຈາກນັ້ນຈື່ງສໍາພາດ ບ້ານ.

ຕ້ອງເຕົ້າໂຮມທັງໝົດ ຫົວໜ້າຄົວເຮືອນຢູ່ ໃນບ້ານຕົວແທນ, ອະທິບາຍ ຈະສໍາຫລວດຄືແນວໃດ, ແລ້ວນັກເດີນສໍາຫລວດຈື່ງໄປຫາທັງໝົດ 15 ຄົວເຮືອນທີ່ໄດ້ເລືອກໄວ້ ແລ້ວຈື່ງດໍາເນີນການສໍາພາດ ຫົວໜ້າຄົວເຮືອນ/ພັນລະຍາຂອງລາວ ຫລື ຜູ້ໃຫຍ່ທີ່ຮັບຜິດຊອບໃນຄົວເຮືອນ, ນັກ

ເດີນສຳຫລວດຍັງຈະສຳພາດ ແມ່ຍິງໃນເກນອາຍຸ 15- 45 ປີ ແລະ ເດັກນ້ອຍອາຍຸຕ່ຳກ່ວາ 5 ປີທີ່ຢູ່ໃນນັ້ນ.

**2. ວິທີການຄັດເລືອກຄົວເຮືອນຕົວແທນ :**

ໃນການຄັດເລືອກເອົາຄົວເຮືອນຕົວແທນເພື່ອມາເປັນເປົ້າໝາຍໃນການສຳຫລວດນີ້ ນັກເດີນສຳຫລວດຈຳເປັນຕ້ອງສ້າງບັນຊີຄົວເຮືອນພາຍໃນບ້ານຂຶ້ນ. ຫລັງຈາກນັ້ນໃຫ້ກວດຄືນບັນຊີຄົວເຮືອນດັ່ງກ່າວວ່າມັນຖືກຕ້ອງກັບຕົວຈິງແລ້ວບໍ່ ໂດຍແມ່ນນາຍບ້ານເປັນຜູ້ຊ່ວຍ.

ພາຍຫລັງທີ່ນັກເດີນສຳຫລວດໄດ້ຈົດກ່າຍບັນຊີຫົວໜ້າຄົວເຮືອນ ກັບນາຍບ້ານເປັນທີ່ຖືກຕ້ອງຮຽບຮ້ອຍແລ້ວ, ນັກເດີນສຳຫລວດຈະຕ້ອງເລືອກເອົາ 20 ຄົວເຮືອນທີ່ເປັນຕົວແທນ ຢູ່ໃນບ້ານນັ້ນ, ເພື່ອມາຊອກຫາໄລຍະຫ່າງຄື: ເອົາຈຳນວນຄົວເຮືອນທັງໝົດທີ່ມີຢູ່ໃນບ້ານ ມາຫານ ໃຫ້ຈຳນວນຄົວເຮືອນຕົວແທນທັງໝົດໃນບ້ານ (20 ຄົວເຮືອນ) ແລ້ວຈະອອກມາເປັນໄລຍະຫ່າງ, ຕົວຢ່າງ: ຄົວເຮືອນທັງໝົດໃນບ້ານມີ 94 ຄົວເຮືອນ.

ເຮົາຕ້ອງການຄົວເຮືອນຕົວແທນ 15 ຄົວເຮືອນ

ຊອກຫາໄລຍະຫ່າງ: 94/20 = 4.7 ⟶ ໄລຍະຫ່າງແມ່ນ 5

ວິທີການເລືອກເອົາຄົວເຮືອນຕົວແທນ ແມ່ນນຳໃຊ້ວິທີເລືອກແບບບັງເອີນ, ເພື່ອເລືອກເອົາຄົວເຮືອນຕົວແທນທຳອິດ ນັກເດີນສຳຫລວດອາດຈະໃຫ້ຄະນະບ້ານຈົກສະຫລາກເອົາຄົວເຮືອນໃດນຶ່ງໂດຍບັງເອີນ. ຕົວຢ່າງ : ໃນກໍລະນີ ທີ່ເລືອກໄດ້ເລກ 5. ຄົວເຮືອນເລກທີ່ 5 ໃນບັນຊີຄົວເຮືອນແມ່ນຄົວເຮືອນເລີ້ມຕົ້ນໃຫ້ຄຳຖາມດວົງມົນອ້ອມເອົາເລກ 5 ໃນຊ່ອງທີ່ນຶ່ງຂອງບັນຊີຄົວເຮືອນ. ເພື່ອຄັດເລືອກເອົາຄົວເຮືອນຕົວແທນທີ່ 2 ເຮົາຈະເອົາຄົວເຮືອນທີ່ຄັດເລືອກໄດ້ທຳອິດມາ ບວກໃຫ້ໄລຍະຫ່າງ ແລ້ວຈະໄດ້ຄົວເຮືອນຕົວແທນທີ່ສອງ.

<u>ຕົວຢ່າງ: 1</u>. ຄົວເຮືອນຕົວແທນຫລັງທຳອິດ ເລກ 5

2. ຄົວເຮືອນຕົວແທນຫລັງທີ່ 2 ແມ່ນ 5+5 = 10
3. ຄົວເຮືອນຕົວແທນຫລັງທີ່ 3 ແມ່ນ 15+5 = 20
4. ຄົວເຮືອນຕົວແທນຫລັງທີ່ 4 ແມ່ນ 20+5 =25
5. ເຮັດໄປເລື້ອຍໆຈົນຄົບຕາມຈຳນວນ 20 ຄົວເຮືອນ.

ໃນຕົວຈິງ ຈະມີຫລາຍກໍລະນີທີ່ອາດຈະເກີດຂຶ້ນ ສະນັ້ນສະເໜີບາງກໍລະນີ ດັ່ງນີ້ :

1. ກໍລະນີບ້ານໃດມີ ຈຳນວນຄົວເຮືອນ ນ້ອຍກ່ວາຫລືເທົ່າກັບ 20 ຄົວເຮືອນໃຫ້ເອົາໝົດທຸກຄົວເຮືອນເປັນຕົວແທນ.

2. ກໍລະນີບ້ານມີຄົວເຮືອນລະຫວ່າງ 21-29 ຄົວເຮືອນ ແມ່ນໃຫ້ເຮັດສະລາກ ແລະ ຈົກເອົາສະຫລາກນັ້ນ ຊາວໃບ.

**ໂຄງສ້າງຂອງໃບສອບຖາມ**

1. ໃບສອບຖາມຄົວເຮືອນ :
   - A : ຂໍ້ມູນຄົວເຮືອນ
   - B : ແຫລ່ງລາຍຮັບ
   - C : ແຫລ່ງອາຫານ
   - D : ນ້ຳສະອາດແລະສິ່ງແວດລ້ອມ
   - F : ການລ້າງມື
   - G : ເກືອປະສົມສານອີໂອດ
   - H : ບັນຊີຄົວເຮືອນ
   - I : ການສຶກສາ
   - J : ແຮງງານເດັກ
2. **ຖາມແມ່ຍິງອາຍຸ 15-45 ປີ**
   - ໂມດູນ 1 : ຂໍ້ມູນກ່ຽວກັບແມ່ຍິງ.
   - ໂມດູນ 2 : ສັກຢາກັນບາດທະຍັກ.
   - ໂມດູນ 3 : ສຸຂະພາບຂອງແມ່ແລະເດັກເກີດໃໝ່
3. **ຖາມເດັກນ້ອຍອາຍຸຕ່ຳກວ່າ 5 ປີ**
   - ໂມດູນ 1 : ການລົງທະບຽນການເກີດ ແລະການຮຽນຮູ້ເລີ້ມຕົ້ນ
   - ໂມດູນ 2 : ວິຕາມິນ ເອ
   - ໂມດູນ 3 : ການລ້ຽງລູກດ້ວຍນົມແມ່
   - ໂມດູນ 4 : ການດູແລຮັກສາສຸຂະພາບເດັກ
   - ໂມດູນ 5 : ມາລາເລຍ (ໄຂ້ຍຸງ)
   - ໂມດູນ 6 : ສັກຢາກັນພະຍາດ
   - ໂມດູນ 7 : ການຊັ່ງນ້ຳໜັກຂອງເດັກ.